# ຄຳຖາມທີ່ຖາມເລື້ອຍໆກ່ຽວກັບເຄື່ອງມືກວດພະຍາດ COVID-19 ທີ່ໝົດອາຍຸ

**ຢ່າຖິ້ມເຄື່ອງມືກວດພະຍາດ COVID-19 ທີ່ຍັງມີທີ່ໝົດອາຍຸຂອງທ່ານ. ນີ້ແມ່ນວິທີທີ່ຈະຮູ້ວ່າເຄື່ອງມືກວດພະຍາດ COVID-19 ຂອງທ່ານຍັງເປັນໃຊ້ຫຼືບໍ່ຫຼັງຈາກວັນໝົດອາຍຸທີ່ລະບຸໄວ້ໃນກ່ອງ.**

## ຂ້າພະເຈົ້າສາມາດໃຊ້ໄດ້ເຄື່ອງມືກວດພະຍາດ COVID-19 ທີ່ໝົດອາຍຸແລ້ວແມ່ນບໍ?

ແມ່ນ. Washington State Department of Health (DOH, ພະແນກສຸຂະພາບຂອງລັດວໍຊິງຕັນ) ໄດ້ເຜີຍແຜ່ ການອະນຸມັດຢ່າງເປັນທາງການສຳລັບການນຳໃຊ້ເຄື່ອງມືກວດທີ່ໝົດອາຍຸ (ເປັນພາສາອັງກິດ) ຕາບໃດທີ່ເຄື່ອງມືກວດຜ່ານການຄວບຄຸມຄຸນນະພາບ, ເຊິ່ງພວກເຮົາອະທິບາຍໄວ້ຂ້າງລຸ່ມນີ້.

ນອກຈາກນີ້, ບາງເຄື່ອງມືກວດພະຍາດ COVID-19 ຍັງໄດ້ຮັບການຕໍ່ອາຍຸການເກັບຮັກສາຈາກ U.S. Food and Drug Administration (FDA, ອົງການອາຫານ ແລະ ຢາຂອງສະຫະລັດ), ເຊິ່ງໃຫ້ວັນທີໝົດອາຍຸໃໝ່ແກ່ເຄື່ອງມືກວດເຫຼົ່ານັ້ນ ທີ່ແຕກຕ່າງຈາກສິ່ງທີ່ທ່ານເຫັນຢູ່ໃນກ່ອງ. ທ່ານສາມາດເບິ່ງ FDA ບັນຊີລາຍຊື່ເຄື່ອງມືກວດທີ່ມີການຕໍ່ອາຍຸເກັບຮັກສາ (ເປັນພາສາອັງກິດ ແລະ ພາສາສະເປນ) ເພື່ອເບິ່ງວ່າເຄື່ອງມືກວດໃດມີວັນໝົດອາຍຸທີ່ໄດ້ຮັບການປັບປຸງ. ເຖິງແມ່ນວ່າເຄື່ອງມືກວດມີວັນໝດອາຍຸທີ່ໄດ້ຮັບການປັບປຸງໃນອະດີດກໍ່ຕາມ, ຕາມ DOH, ທ່ານຍັງສາມາດໃຊ້ເຄື່ອງມືກວດໄດ້ ຖ້າມັນຜ່ານການຄວບຄຸມຄຸນນະພາບ.

ຈຸດທີ່ສຳຄັນ: ທ່ານສາມາດນຳໃຊ້ເຄື່ງມືກວດທີ່ໝົດອາຍຸໄດ້ ຕາບໃດທີ່ມັນຜ່ານການກວດສອບການຄວບຄຸມຄຸນນະພາບໃນຕົວ.

## ຂ້າພະເຈົ້າຈະຮູ້ໄດ້ແນວໃດວ່າເຄື່ອງມືກວດພະຍາດ COVID-19 ທີ່ໝົດອາຍຸແລ້ວຈະໃຫ້ຜົນທີ່ຖືກຕ້ອງແກ່ຂ້າພະເຈົ້າ?

ເຄື່ອງມືກວດພະຍາດ COVID-19 ຂອງທ່ານຈະມາພ້ອມກັບຄຳແນະນຳກ່ຽວກັບຂັ້ນຕອນທີ່ຕ້ອງເຮັດ ເພື່ອຮັບປະກັນວ່າເຄື່ອງມືກວດເຮັດວຽກໄດ້ຢ່າງເຊື່ອຖື, ເຊິ່ງເອີ້ນວ່າ "ການຄວບຄຸມຄຸນນະພາບ." ປົກກະຕິແລ້ວທ່ານຈະພົບຂະບວນການຄວບຄຸມຄຸນນະພາບ ໃນພາກຜົນການກວດຢູ່ໃນເອກະສານຄຳແນະນຳເຄື່ອງມືກວດ. ຂະບວນການຄວບຄຸມຄຸນນະພາບ ສຳລັບເຄື່ອງມືກວດຢູ່ເຮືອນຫຼາຍແມ່ນພຽງແຕ່ໃຫ້ແນ່ໃຈວ່າຂີດທີ່ຢູ່ຂ້າງ "C" ທີ່ພິມຢູ່ໃນແຜ່ນກວດຈະປາກົດຂຶ້ນເມື່ອຕົວຢ່າງຖືກໃສ່ຂີດນັ້ນ. ຖ້າຂະບວນການຄວບຄຸມຄຸນນະພາບລົ້ມເຫຼວ, ທ່ານຄວນຖິ້ມເຄື່ອງມືກວດ.

## ເຄື່ອງມືກວດຈະໄດ້ຮັບການຕໍ່ອາຍຸການເກັບຮັກສາແນວໃດ?

ຜູ້ຜະລິດຂອງເຄື່ອງມືກວດພະຍາດ COVID-19 ຈຳເປັນຕ້ອງເຮັດການສຶກສາທີ່ເຫັນວ່າເຄື່ອງມືກວດສາມາດນຳໃຊ້ໄດ້ດົນປານໃດ. FDA ຕິດຕາມຂໍ້ມູນນີ້ເພື່ອອະນຸມັດວັນໝົດອາຍຸທີ່ໄດ້ຮັບການຂະຫຍາຍ. ການຕໍ່ອາຍຸການເກັບຮັກສາໃຫ້ເຄື່ອງມືກວດພະຍາດ COVID-19 ແມ່ນເປັນເລື່ອງປົກກະຕິ ເນື່ອງຈາກວ່າມີຂໍ້ມູນເພີ່ມເຕີມກ່ຽວກັບວ່າເຄື່ອງມືກວດເຫຼົ່ານີ້ໃຊ້ໄດ້ດົນປານໃດ.

ພວກເຮົາຫວັງວ່າຂໍ້ມູນນີ້ເຮັດຈະເຮັດໃຫ້ທ່ານໝັ້ນໃຈ ເມື່ອນຳໃຊ້ເຄື່ອງມືກວດທີ່ເບິ່ງຄືວ່າໝົດອາຍຸ ໂດຍອີງໃສ່ວັນໝົດອາຍຸຢູ່ໃນກ່ອງ. ຕອນນີ້ທ່ານຮູ້ແລ້ວວ່າຈະເຮັດແນວໃດເພື່ອເບິ່ງວ່າເຄື່ອງມືກວດພະຍາດ COVID-19 ຂອງທ່ານໃຊ້ໄດ້ດີ: ພຽງແຕ່ປະຕິບັດຕາມຄຳແນະນຳເຄື່ອງມືກວດເພື່ອຄວບຄຸມຄຸນນະພາບ. ຖ້າເຄື່ອງມືກວດຜ່ານການຄວບຄຸມຄຸນນະພາບ, ມັນຍັງປອດໄພ ແລະ ດີທີ່ຈະນຳໃຊ້.

ຂໍຂອບໃຈໃຫ້ທຸກທ່ານທີ່ຮັກສາຄວາມປອດໄພ ແລະ ສຸຂະພາບທີ່ດີໃນຊຸມຊົນຂອງພວກເຮົາ!

ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວຫາ civil.rights@doh.wa.gov

DOH 421-037 February 2023 Lao